ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ຫ້ອງການ
ຄະນະກຳມະການ ຈັດຊື້-ຈັດຈ້າງ

473
ເລກທີ /ຫກ
ນະຄອນຫຼວງວຽງຈັນ ວັນທີ 18 NOV 2026

ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

ຫ້ອງການ ກະຊວງ, ຄະນະກຳມະການ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງ ທ່ານຜູ້ອຳນວຍການບໍລິສັດດ້ານ ເຄື່ອງ ໄອທີ (ຄອມພິວເຕີແລັບທອບ), ທີ່ມີຄຸນວຸດທິ ເໝາະສົມເຂົ້າຮ່ວມປະມູນຈັດຊື້ ດ້ວຍຮູບແບບປະມູນເປີດກ້ວາງແບບຮີບດ່ວນ, ດັ່ງມີລາຍລະອຽດດັ່ງລຸ່ມນີ້:

1. ສູນຄວບຄຸມອັນຕະໂລກ, ກົມຄວບຄຸມພະຍາດຕິດຕໍ່ ກະຊວງສາທາລະນະສຸກ, ໄດ້ຮັບງົບປະມານທຶນສົມທົບລັດຖະບານ ພາກ 62 ປະຈຳສົກປີ 2026 ໃນການຈັດຊື້ ຄອມພິວເຕີແລັບທອບ ສຳລັບລະບົບເຊື່ອມສານຂໍ້ມູນຫ້ອງວິເຄາະອັນຕະໂລກຂັ້ນສູນກາງ, ແຂວງ ແລະ ເມືອງ, ໄລຍະເວລາການສົ່ງມອບເຄື່ອງແມ່ນ 15-30 ວັນ ແລະ ປະເມີນເປັນມູນຄ່າລວມ;
2. ການປະມູນດັ່ງກ່າວຈະດຳເນີນໃນຮູບແບບການປະມູນເປີດກວ້າງ ແບບຮີບດ່ວນ 15 ວັນ, ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017; ຄຳແນະນຳກ່ຽວກັບການຈັດຕັ້ງປະຕິ ບັດກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຂໍ້ຕົກ ລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ສະບັບເລກທີ 1005/ສທ, ລົງວັນທີ 25 ພຶດສະພາ 2026;
3. ບໍລິສັດທີ່ມີຄຸນວຸດທິ ທີ່ເໝາະສົມ ແລະ ສົນໃຈເຂົ້າຮ່ວມການປະມູນ ສາມາດຕິດຕໍ່ພົວພັນໄດ້ທີ່ ກອງເລຂາຊ່ວຍວຽກ ຂອງຄະນະກຳມະການ ວິຊາການຈັດຊື້-ຈັດຫາເຄື່ອງໃຊ້ຫ້ອງການ ແລະ ການບໍລິການຕ່າງໆ (ອະນາໄມ, ເກັບຂີ້ເຫຍື້ອ, ຮັກສາຄວາມປອດໄພ, ຊັກເຄື່ອງ, ໄອທີ (Hardware, Software), ພາຫະນະ, ສິ່ງພິມຕ່າງໆ); ຫ້ອງການ ກະຊວງສາທາລະນະສຸກ, ບ້ານທາດຂາວ, ຖະໜົນສີເມືອງ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ, ໂທ: 021 840761 ແລະ ທ່ານສາມາດຊື້ເອກະສານປະມູນຄົບຊຸດທີ່ເປັນພາສາລາວ, ເລີ່ມແຕ່ວັນພຸດ ວັນທີ 18 ພະຈິກ 2026 ເປັນຕົ້ນໄປ, ໃນລາຄາຊອງລະ 1,300,000 ກີບ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
4. ຊອງປະມູນຕ້ອງສົ່ງໃຫ້ ກອງເລຂາຊ່ວຍວຽກ ຂອງຄະນະກຳມະການ ວິຊາການຈັດຊື້-ຈັດຫາເຄື່ອງໃຊ້ຫ້ອງການ ແລະ ການບໍລິການຕ່າງໆ ທີ່ຫ້ອງປະຊຸມ ຫ້ອງການກະຊວງ ສາທາລະນະສຸກ ຊັ້ນ 02 (ຕຶກໃໝ່), ບ້ານທາດຂາວ, ຖະໜົນສີເມືອງ, ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ, ກ່ອນເວລາ 09 ໂມງ 30 ນາທີ ຂອງວັນພະຫັດ, ວັນທີ 03 ທັນວາ 2026. ເອກະສານ ແລະ ຊອງທີ່ສົ່ງມາທາງເອເລັກ ໂຕນິກຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກ່ວາກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະເປີດໃນເວລາ 09 ໂມງ 30 ນາທີ ຂອງວັນພະຫັດ, ວັນທີ 03 ທັນວາ 2026. ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;
5. ເອກະສານການປະມູນຕ້ອງໄດ້ປະກອບດ້ວຍໜັງສືຄ້ຳປະກັນການປະມູນໂດຍການຢັ້ງຢືນ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍໃນສິ່ງທີ່ສະເໜີມາໃນລາຄາ ແລະ ເງື່ອນໄຂການປະມູນ. ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນດ້ວຍກຽດຂອງບໍລິສັດ ຊຶ່ງມີອາຍຸຄ້ຳປະກັນການປະມູນ 90 ວັນ ນັບແຕ່ມື້ເປີດຊອງ ເປັນຕົ້ນໄປ ແລະ ມີອາຍຸເພີ່ມອີກ 28 ວັນ.

ຫົວໜ້າຫ້ອງການ
ຄະນະກຳມະການຈັດຊື້-ຈັດຈ້າງ

ກະຊວງສາທາລະນະສຸກ ຫ້ອງການ

ປອ. ດຣ. ບຸນຊູ ແກ້ວຫາວົງ